ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**************

ກະຊວງການຄ້າແລະທ່ອງທ່ຽວ

ເລກທີ 1093/ກຄທ.ພນ

ວຽງຈັນ,ວັນທີ 01 DEC 2000

# ຄຳສັ່ງແນະນຳ

**ເຖິງ** : ຫົວໜ້າພະແນກການຄ້າແລະທ່ອງທ່ຽວແຂວງ,ກຳແພງນະຄອນ ແລະເຂດພິເສດ ໃນທົ່ວປະເທດ.

**ເລື້ອງ** : ການແນະນຳໃຫ້ບໍລິສັດວິສາຫະກິດຕ່າງໆນຳສິນຄ້າທີ່ຜະລິດໄດ້ພາຍໃນເອົາໄປຈຳໜ່າຍແທນການນຳເຂົ້າ.

- ອີງຕາມດຳລັດ ເລກທີ24/ນຍ,ລົງວັນທີ24/03/99 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງການຄ້າແລະທ່ອງທ່ຽວ.
- ອີງຕາມມະຕິກອງປະຊຸມຄົບຄະນະຄັ້ງທີ7( ສະໄໝທີII ) ຂອງຄະນະບໍລິຫານງານສູນກາງພັກວ່າດ້ວຍເພີ່ມທະວີວຽກງານການຄຸ້ມຄອງດັດສົມຂອງລັດ.

ເພື່ອຊຸກຍູ້ສົ່ງເສີມການລົງທຶນ ການຜະລິດສິນຄ້າຮັບໃຊ້ພາຍໃນ ທົດແທນການນຳເຂົ້າ ແລະການຜະລິດເພື່ອສົ່ງອອກໃຫ້ນັບມື້ນັບຫລາຍຂຶ້ນ, ລັດສົ່ງເສີມ ແລະປົກປ້ອງສິດ ອັນຊອບທຳຕໍ່ຜູ້ລົງທຶນສູ່ການຜະລິດສິນຄ້າ. ສະນັ້ນປະຕິບັດຕາມທິດທາງນະໂຍບາຍ ຂອງພັກ-ລັດ, ພາລະບົດບາດໜ້າທີ່ ຂອງອົງການຄຸ້ມຄອງມະຫາພາກ ກະຊວງການຄ້າແລະທ່ອງທ່ຽວ ຈຶ່ງອອກຄຳສັ່ງແນະນຳເຖິງຫົວໜ້າພະແນກການຄ້າ ແລະທ່ອງທ່ຽວແຂວງ, ກຳແພງນະຄອນ ແລະເຂດພິເສດ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຕາມທິດທາງຕໍ່ໄປນີ້ :

1). ສິນຄ້າທີ່ແຈ້ງມານີ້ ແມ່ນຜະລິດຕະພັນທີ່ຜະລິດຢູ່ພາຍໃນປະເທດ ຊຶ່ງມາດຖານ, ຂະໜາດ, ຄຸນນະພາບ, ລາຄາ, ຈຳນວນ ສາມາດຕອບສະໜອງໄດ້ກັບຄວາມຕ້ອງການ ຂອງຕະຫລາດ ຈຳໜ່າຍ ຄື : ເຫລັກເສັ້ນ, ສັງກະສີ, ນ້ຳສີ, ນ້ຳມັນພືດເນື້ອປາມ (ລະອຽດທີ່ຢູ່ໂຮງງານຜະລິດຂະໜາດ, ມາດຖານ ຂອບເຂດຄວາມສາມາດ ສະໜອງສິນຄ້າ ມີເອກະສານຄັດຕິດ ເລກທີ 1272/ພນ,ລົງວັນທີ1/12/2000).

2). ໃຫ້ຫົວໜ້າພະແນກການຄ້າ ແລະທ່ອງທ່ຽວແຂວງ, ກຳແພງນະຄອນ ແລະເຂດພິເສດ ໃນທົ່ວປະເທດແນະນຳ, ລຸລ່ວງ ໃຫ້ຫົວໜ້າກຸ່ມບໍລິສັດ, ບໍລິສັດຕ່າງໆທັງພາກລັດ ແລະເອກະຊົນ ຮັບຮູ້ ແລະຂຶ້ນແຜນ, ຜູກພັນເກັບຊື້ສິນຄ້າ ທີ່ເຮົາຜະລິດໄດ້ນັ້ນໄປຈຳໜ່າຍ.

3). ບໍລິສັດ ຫລືໃນນາມນິຕິບຸກຄົນ ມີຈຸດປະສົງນຳເຂົ້າ ເພື່ອຮັບໃຊ້ໂຄງການ ຫລືນຳເຂົ້າມາຂາຍທົ່ວໄປ ຊຶ່ງແມ່ນຊະນິດສິນຄ້າ ຂະໜາດຄຸນນະພາບເຂດດຽວກັນນັ້ນ ຫລືກໍລະນີທາງໂຮງງານທາກຜະລິດບໍ່ທັນ ແຕ່ຄວາມຕ້ອງການຂອງຕະຫລາດສູງ ຕ້ອງໃຫ້ພະແນກການຄ້າແຂວງ, ກຳແພງນະຄອນ ແລະເຂດພິເສດໃນທົ່ວປະເທດ ນຳສະເໜີເຖິງກະຊວງການຄ້າ ແລະທ່ອງທ່ຽວ ເປັນຜູ້ພິຈາລະນາຄົ້ນຄ້ວາອະນຸຍາດ ຖ້າເຫັນວ່າມີຄວາມຈຳເປັນ.

4). ບໍລິສັດຜູ້ຜະລິດສິນຄ້າດັ່ງກ່າວ ຕ້ອງຮັບປະກັນການຜະລິດການສະໜອງ ໃຫ້ເປັນປົກກະຕິຕາມມາດຖານຄຸນນະພາບ ພ້ອມນັ້ນຕ້ອງແນະນຳສິນຄ້າ ແລະຂະຫຍາຍຕົວແທນຈຳໜ່າຍສິນຄ້າຂອງຕົນ~~ໃຫ້ກ້ວາງອອກໃນທົ່ວປະເທດ.~~

5). ປະສານສົມທົບພາກສ່ວນກ່ຽວຂ້ອງ ເພື່ອປຶກສາຫາລືກັນເປັນເອກະພາບ ແລ້ວສະເໜີລາຍງານ ທ່ານເຈົ້າແຂວງ ເພື່ອຈັດຕັ້ງປະຕິບັດ ເຊັ່ນ :

- ສະກັດກັ້ນການຄ້າຂາຍເຖື່ອນ.
- ວິທີການສຳລະສະສາງ ເພື່ອບໍ່ໃຫ້ມີລັກສະນະນຳສິນເຊື່ອເຂົ້າມາກ່ອນ.
- ກວດກາການປະຕິບັດແຜນດູນການຄ້າຢ່າງເຂັ້ມງວດ.

6). ມອບໃຫ້ພະແນກການຄ້າ ແລະທ່ອງທ່ຽວ ຂອງແຂວງ, ກຳແພງນະຄອນ ແລະເຂດພິເສດເອົາໃຈໃສ່ຕິດຕາມ, ກວດກາ ໃນການຈັດຕັ້ງປະຕິບັດຕົວຈິງຢ່າງເຂັ້ມງວດ, ພ້ອມທັງລາຍງານໃຫ້ກະຊວງຊາບເປັນແຕ່ລະໄລຍະ.

7). ມອບໃຫ້ກົມການຄ້າພາຍໃນ, ກົມການຄ້າຕ່າງປະເທດ ຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳສັ່ງແນະນຳ ສະບັບນີ້ຢ່າງເຂັ້ມງວດ.

8). ຄຳສັ່ງແນະນຳ ສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນໃບແຈ້ງການ ເລກທີ 0994/ກຄທ.ພົນ, ລົງວັນທີ 26/10/2000.

ດັ່ງນັ້ນ, ຈຶ່ງໃຫ້ທຸກພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງນີ້ຢ່າງເຂັ້ມງວດ.

ລັດຖະມົນຕີ
ວ່າການກະຊວງການຄ້າແລະທ່ອງທ່ຽວ

ສຽວສະຫວາດ ສະແຫວງສຶກສາ

*** _ບ່ອນສົ່ງ_ :**

- ຫ້ອງວ່າການສູນກາງພັກ ( ເພື່ອລາຍງານ )
- ຫ້ອງວ່າການສຳນັກງານນາຍົກ ( ເພື່ອລາຍງານ ).
- ລັດຖະມົນຕີ ກະຊວງການເງິນ ( ເພື່ອລາຍງານ ).
- ລັດຖະມົນຕີ ກະຊວງອຸດສາຫະກຳ-ຫັດຖະກຳ ( ເພື່ອລາຍງານ ).
- ຜູ້ວ່າການ ທະນາຄານແຫ່ງ ສປປລາວ ( ເພື່ອລາຍງານ ).
- ກົມພາສີ ( ກະຊວງການເງິນ ) ( ເພື່ອຄວາມຮ່ວມມື ).
- ສຳເນົາ.